ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຍຸດທະສາດ

## ວ່າດ້ວຍການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສປປ ລາວ

## 2016-2025

January 2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຍຸດທະສາດ

## ວ່າດ້ວຍການອອກໃບປະກອບວິຊາປິ່ນປົວ
## ແລະ ການຂຶ້ນທະບຽນຂອງ ສປປ ລາວ

## 2016-2025

January 2016

# ສາລະບານ

ຫົວຂໍ້ ໜ້າ


I. ບົດນຳ............................................................................................. 1

1. ຄວາມເປັນມາ................................................................................... 1
2. ສະພາບການປະກອບວິຊາຊີບປິ່ນປົວ ໃນ ສປປ ລາວ............................................ 1
3. ຄວາມຈຳເປັນໃນການສ້າງ ຍຸດທະສາດລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ........................................................................... 2
4. ຈຸດປະສົງຂອງຍຸດທະສາດລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ .......................................................................... 2
5. ການອະທິບາຍຄຳສັບ.......................................................................... 2

II. ຍຸດທະສາດ........................................................................................ 4

1. ຫຼັກການ........................................................................................ 4
2. ເປົ້າໝາຍ....................................................................................... 4
3. ຈຸດປະສົງລວມ.................................................................................. 4
4. ຍຸດທະສາດ..................................................................................... 4
   1) ສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ....................................... 4
   2) ສ້າງບັນດານິຕິກຳຕ່າງໆສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ............................................................................ 5
   3) ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດ ສຳລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ............................................ 6
   4) ກຳນົດມາດຕະຖານ, ຂະບວນການສຳລັບການອອກໃບປະກອບວິຊາຊີບ ປິ່ນປົວແລະ ການຂຶ້ນທະບຽນແຕ່ລະປະເພດ................................................ 6
   5) ສ້າງລະບົບການຈັດຕັ້ງປະຕິບັດການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ບັນລຸ ມາດຕະຖານທີ່ກຳນົດໄວ້ເພື່ອຕໍ່ອາຍຸການຂຶ້ນທະບຽນ....................................... 7
   6) ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານສຳລັບລະບົບອອກໃບປະກອບວິຊາຊີບ ປິ່ນປົວ ແລະ ການຂຶ້ນທະບຽນ, ສ້າງຄວາມເຂັ້ມແຂງໃຫ້ການຕິດຕໍ່ສື່ສານ ມວນຊົນ........................................................................................ 8
5. ຂົງເຂດການຈັດຕັ້ງປະຕິບັດ...................................................................... 9

III. ການຈັດຕັ້ງປະຕິບັດ........................................................................................ 9

IV. ບົດບັນຍັດສຸດທ້າຍ........................................................................................ 9

ເອກະສານຊ້ອນທ້າຍ 1: ນິຕິກໍາຕ່າງໆທີ່ກ່ຽວຂ້ອງ.................................................................. 10

ເອກະສານຊ້ອນທ້າຍ 2: ຍຸດທະສາດກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ
ແລະ ຂຶ້ນທະບຽນ....................................................................... 11

ເອກະສານຊ້ອນທ້າຍ 3: ຂັ້ນຕອນການອອກໃບປະກອບວິຊາຊີບປິ່ນປົວ........................................ 15

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
*****000*****

ກະຊວງສາທາລະນະສຸກ

ເລກທີ 3172/ສທ
ນະຄອນຫຼວງວຽງຈັນ, ວັນທີ 03 DEC 2015

# ຂໍ້ຕົກລົງ
## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 178/ນຍ, ລົງວັນທີ 05 ເມສາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ ສະບັບເລກທີ 2977/ສທ, ລົງວັນທີ 18 ພະຈິກ 2013 ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນເຂົ້າໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ.
- ອີງຕາມ ກອງປະຊຸມປຶກສາຫາລືກ່ຽວກັບ ຍຸດທະສາດວ່າດ້ວຍລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສ ປປລາວ ແຕ່ປີ 2016-2025 ຄັ້ງວັນທີ 03 ພະຈິກ 2015.
- ອີງຕາມ ໃບສະເໜີຂອງກົມປິ່ນປົວ ເລກທີ 1673/ກປປ, ລົງວັນທີ 26 ພະຈິກ 2015.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຕົກລົງ:**

ມາດຕາ 1. ຮັບຮອງເອົາຍຸດທະສາດວ່າດ້ວຍລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສ ປປລາວ ແຕ່ປີ 2016-2025.

ມາດຕາ 2. ມອບໃຫ້ກົມປິ່ນປົວເປັນໃຈກາງປະສານງານ ເພື່ອຜັນຂະຫຍາຍໃນການຈັດຕັ້ງປະຕິບັດຍຸດທະສາດວ່າດ້ວຍລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສ ປປລາວ ແຕ່ປີ 2016-2025.

ມາດຕາ 3. ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ, ກົມຈັດຕັ້ງ-ພະນັກງານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ

ບ່ອນນຳສົ່ງ:

| | |
|---|---|
| - ລັດຖະມົນຕີຊ່ວຍວ່າການທ່ານລະ | 01 ສະບັບ |
| - ຫ້ອງການກະຊວງສາທາລະນະສຸກ | 01 ສະບັບ |
| - ກົມກອງອ້ອມຂ້າງກະຊວງສາທາ ບ່ອນລະ | 01 ສະບັບ |
| - ພະແນກສາທາລະນະສຸກແຂວງ-ນະຄອນຫຼວງ ບ່ອນລະ | 01 ສະບັບ |
| - ສຳເນົາ | 02 ສະບັບ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----------oo----------

**ກະຊວງສາທາລະນະສຸກ** **ເລກທີ** 2098 **/ສທ**

**ນະຄອນຫຼວງວຽງຈັນ, ວັນທີ** 03 DEC 2015

**ຍຸດທະສາດ**

**ວ່າດ້ວຍລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ**

**ຂອງສປປ ລາວແຕ່ປີ 2016 - 2025**

# I. ບົດນຳ

## 1. ຄວາມເປັນມາ

ສະພາບການພັດທະນາ ວິທະຍາສາດ ດ້ານສຸຂະພາບໃນທົ່ວໂລກ ໄດ້ມີການຂະຫຍາຍຕົວຢ່າງໄວວາ ໄປຄຽງຄູ່ກັບຄວາມຈະເລີນກ້າວໜ້າ ດ້ານເຕັກໂນໂລຊີທາງການແພດ, ລັດຖະບານ ສປປ ລາວ ໄດ້ມີແຜນນະໂຍບາຍ ພັດທະນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາຮອດ ປີ 2020. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ກະຊວງສາທາລະນະສຸກ ກໍ່ໄດ້ເອົາໃຈໃສ່ບັນຫາສຸຂະພາບຂອງປະຊາຊົນ ແນໃສ່ ຫຼຸດຜ່ອນ ອັດຕາການຕາຍ ຂອງ ແມ່ ແລະ ເດັກ ແລະ ໃຫ້ບັນລຸການປົກຄຸມການບໍລິການສຸຂະພາບທຸກທົ່ວໜ້າ ໃນ ປີ 2025, ໂດຍມີແຜນປະຕິຮູບວຽກງານສາທາລະນະສຸກໃນດ້ານການບໍລິການຮັກສາສຸຂະພາບ ແລະ ດ້ານຊັບພະຍາກອນມະນຸດສາທາລະນະສຸກ, ດ້ານການເງິນສາທາລະນະສຸກ, ດ້ານການບໍລິຫານຄຸ້ມຄອງ, ບໍລິຫານຈັດການ, ການປະສານງານ ແລະ ລະບົບຂໍ້ມູນຂ່າວສານສາທາລະນະສຸກ. ເພື່ອເຮັດໃຫ້ການບໍລິການສຸຂະພາບທີ່ເປັນບຸລິມະສິດທີ່ໜຶ່ງ ແມ່ນເລັ່ງໃສ່ການຂະຫຍາຍຕາໜ່າງການບໍລິການສຸຂະພາບໃຫ້ທົ່ວເຖິງ, ພັດທະນາ ແລະ ຮັບຮອງຄຸນນະພາບການບໍລິການສຸຂະພາບ, ສ້າງນິຕິກຳໃນການບໍລິຫານຄຸ້ມຄອງ ວ່າດ້ວຍການບໍລິການສາທາລະນະສຸກ.

ເພື່ອເຮັດໃຫ້ ການບໍລິການສຸຂະພາບ (ປິ່ນປົວ) ມີຄຸນນະພາບ, ຮຽກຮ້ອງໃຫ້ມີຂະບວນການພັດທະນາຂີດຄວາມສາມາດ ເພື່ອເປັນເຄື່ອງມືວັດແທກ ມາດຕະຖານ ແລະ ຄຸນນະພາບ ຂອງຜູ້ປະກອບວິຊາຊີບປິ່ນປົວ ໃຫ້ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການຮັບຮູ້ຊຶ່ງກັນ ແລະ ກັນ ທີ່ໄດ້ຮ່ວມເຊັນກັບ ບັນດາປະເທດ ສະມາຊິກ ປະຊາຄົມ ເສດຖະກິດ ອາຊຽນ ໃນ ປີ 2006, ເພື່ອອຳນວຍຄວາມສະດວກໃຫ້ແກ່ ການເຄື່ອນຍ້າຍ ສີມືແຮງງານແບບເສລີ ທາງດ້ານການຄ້າ, ດ້ານການບໍລິການ. ຂໍ້ຕົກລົງ ຮັບຮູ້ຊຶ່ງກັນ ແລະ ກັນ ຕໍ່ວິຊາຊີບທ່ານໝໍ, ທັນຕະແພດ ແລະ ພະຍາບານ ໄດ້ກຳນົດເງື່ອນໄຂ ຂອງແຕ່ລະສາຂາວິຊາຊີບ. ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ພັດທະນາບັນດານິຕິກຳຕ່າງໆ ເພື່ອຮອງຮັບ ຜູ້ປະກອບວິຊາຊີບປິ່ນປົວ ທັງພາຍໃນ ແລະ ຕ່າງປະເທດ.

ນອກຈາກນັ້ນ ຍັງຕ້ອງມີລະບົບພັດທະນາວິຊາຊີບປິ່ນປົວແບບຕໍ່ເນື່ອງ ແນໃສ່ ສ້າງບຸກຄະລາກອນທາງດ້ານສຸຂະພາບ ໃຫ້ມີຄຸນນະພາບ, ສາມາດແຂ່ງຂັນກັບປະເທດອື່ນໄດ້ ລວມທັງ ການພັດທະນາວິຊາຊີບ ທີ່ຄວນສະຫງວນໄວ້ໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວທີ່ເປັນຄົນລາວ.

## 2. ສະພາບການປະກອບວິຊາຊີບປິ່ນປົວ ໃນ ສປປ ລາວ

ຜ່ານມາເຖິງປະຈຸບັນຜູ້ປະກອບວິຊາຊີບປິ່ນປົວ ທີ່ຮຽນຈົບຕາມຫຼັກສູດ, ມີປະກາສະນິຍະບັດຈາກສະຖາບັນການສຶກສາພາຍໃນ ແລະ ຕ່າງປະເທດ ສາມາດປະກອບວິຊາຊີບຕາມການບັນຈຸຊັບຊ້ອນຂອງ ກົມຈັດຕັ້ງ-ພະນັກງານ

ປະຕິບັດ ໜ້າວຽກວິຊາການຕາມຄວາມຮູ້ຄວາມສາມາດທີ່ໄດ້ຮຽນມາໂດຍບໍ່ມີໃບອະນຸຍາດປະກອບວິຊາຊີບ ຍ້ອນວ່າຍັງບໍ່ທັນມີລະບົບການອອກໃບປະກອບວິຊາຊີບ.

ໃນປີ 2005 ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການປິ່ນປົວ, ໃນນັ້ນ ມາດຕາ 58 ໄດ້ລະບຸພາລະບົດບາດຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ຕໍ່ມາມີຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກເລກທີ່ 033/ກຊສ, ລົງວັນທີ່ 24 ມັງກອນ 2007 ວ່າດ້ວຍ ສະພາຄຸ້ມຄອງວິຊາຊີບປິ່ນປົວຊຶ່ງໄດ້ກຳນົດລະບຽບການຕ່າງໆຢ່າງລະອຽດຈະແຈ້ງກ່ຽວກັບການປະກອບວິຊາຊີບປິ່ນປົວ. ຜູ້ທີ່ເຮັດວຽກຢູ່ໃນຂົງເຂດບໍລິການສຸຂະພາບປະຈຸບັນ ຍັງບໍ່ໄດ້ຜ່ານການສອບເສັງລະດັບຊາດ, ກ່ຽວກັບການອອກໃບຢັ້ງຢືນ ແລະ ການຂຶ້ນທະບຽນເປັນຜູ້ປະກອບວິຊາຊີບປິ່ນປົວ, ແຕ່ໄດ້ອອກໃຫ້ພຽງແຕ່ຜູ້ປະກອບວິຊາຊີບປິ່ນປົວທີ່ຂໍອະນຸຍາດເປີດຫ້ອງກວດພະຍາດເອກະຊົນເທົ່ານັ້ນ. ນອກນັ້ນ ກໍ່ຍັງບໍ່ທັນມີຄູ່ມື ແລະ ຕົວຊີ້ວັດທີ່ຊັດເຈນກ່ຽວກັບການບໍລິຫານຄຸ້ມຄອງຜູ້ປະກອບວິຊາຊີບປິ່ນປົວທີ່ເປັນຄົນລາວ ແລະ ຕ່າງປະເທດ ຊຶ່ງພາໃຫ້ບໍ່ສາມາດຈຳແນກໄດ້ວ່າແມ່ນຜູ້ປະກອບວິຊາຊີບປິ່ນປົວ ຫຼື ຜູ້ປະກອບວິຊາຊີບສາທາລະນະສຸກອື່ນໆ.

### 3. ຄວາມຈຳເປັນໃນການສ້າງ ຍຸດທະສາດລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ

ການສະໜອງບໍລິການທາງດ້ານສາທາລະນະສຸກ ໃຫ້ແກ່ປະຊາຊົນທຸກຄົນ ເປັນບຸລິມະສິດຂອງລັດຖະບານລາວ. ການຮັບປະກັນຄຸນນະພາບຂອງການໃຫ້ບໍລິການປິ່ນປົວເປັນສິ່ງຈຳເປັນ ໂດຍຖືເອົາຄົນເຈັບເປັນໃຈກາງ ແລະ ຄວາມປອດໄພຂອງຄົນເຈັບເປັນສຳຄັນໃນສະຖານທີ່ບໍລິການສຸຂະພາບທຸກລະດັບ ແລະ ທຸກປະເພດ.

ເພື່ອຕອບສະໜອງຄວາມຕ້ອງການອັນຮີບດ່ວນໃນການຮັບປະກັນ ແລະ ພັດທະນາຄຸນວຸດທິ ແລະ ການປະຕິບັດງານທີ່ດີຂອງຜູ້ປະກອບວິຊາຊີບປິ່ນປົວ, ຕ້ອງເອົາໃຈໃສ່ຢ່າງຮີບດ່ວນໃນການສ້າງບັນດານິຕິກຳສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວ. ຕ້ອງສ້າງຄວາມສາມາດ ແລະ ຄວາມເຂັ້ມແຂງ ໃຫ້ແກ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ບັນດາຄະນະບໍລິຫານສາຂາວິຊາຊີບຕ່າງໆ ດ້ວຍເຫດວ່າ ສປປ ລາວ ເປັນສະມາຊິກປະຊາຄົມເສດຖະກິດອາຊຽນ ແລະ ບັນດາຜູ້ປະກອບວິຊາຊີບປິ່ນປົວຂອງລາວ ກໍ່ສາມາດໄປປະກອບວິຊາຊີບປິ່ນປົວຢູ່ຕ່າງປະເທດໄດ້.

ສະນັ້ນ, ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ອີງຕາມບັນດານິຕິກຳຕ່າງໆ ເປັນສິ່ງຈຳເປັນສຳລັບການປົກປ້ອງສິດ ແລະ ຜົນປະໂຫຍດສຳລັບຜູ້ປະກອບວິຊາຊີບປິ່ນປົວ ແລະ ຄົນເຈັບ.

### 4. ຈຸດປະສົງ ຂອງຍຸດທະສາດ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ

- ເພື່ອພັດທະນາ ແລະ ການຈັດຕັ້ງປະຕິບັດກອບວຽກ ສຳລັບ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
- ເພື່ອກຳນົດມາດຕະຖານ ແລະ ຂະບວນການໃນການສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ, ກອບວຽກ, ກົນໄກ ແລະ ຂະບວນການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ;
- ເພື່ອໃຫ້ສອດຄ່ອງກັບການຮັບຮູ້ເຊິ່ງກັນ ແລະ ກັນ ຂອງປະຊາຄົມເສດຖະກິດອາຊຽນ.

### 5. ການອະທິບາຍຄຳສັບ

- **ຜູ້ປະກອບວິຊາຊີບປິ່ນປົວ ໝາຍເຖິງ** ຜູ້ທີ່ປິ່ນປົວດ້ວຍວິຊາການແພດ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນ ກົດໝາຍ ວ່າດ້ວຍການປິ່ນປົວ.
- **ຜູ້ປະກອບວິຊາຊີບປິ່ນປົວ ດ້ວຍການແພດສະໄໝໃໝ່ ມີ**: ທ່ານໝໍຊ່ຽວຊານສະເພາະວິຊາ, ທ່ານໝໍ, ແພດຊ່ວຍ, ທັນຕະແພດ, ທັນຕະແພດຊ່ວຍ, ພະຍາບານ, ຜະດຸງຄັນ, ນັກກາຍະພາບບຳບັດ, ນັກເຕັກນິກວິເຄາະ, ນັກລັງສີ, ນັກແທກສາຍຕາ, ນັກຝຶກແອບສຽງ, ນັກຈິດຕະວິທະຍາ ແລະ ນັກໂພຊະນາການ.

- **ຜູ້ປະກອບວິຊາຊີບປິ່ນປົວ ດ້ວຍການແພດພື້ນເມືອງມີ**: ທ່ານໝໍຊ່ຽວຊານການແພດພື້ນເມືອງ, ໝໍຢາພື້ນເມືອງ, ໝໍນວດແຜນໂບຮານ ແລະ ໝໍປັກເຂັມ;

- **ໃບປະກອບວິຊາຊີບປິ່ນປົວ (Health care Professional License)** ໝາຍເຖິງ ໃບຢັ້ງຢືນຂີດຄວາມສາມາດຂອງຜູ້ປະກອບວິຊາຊີບປິ່ນປົວອອກໃຫ້ໂດຍກະຊວງສາທາລະນະສຸກ ຕາມການສະເໜີຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ ເພື່ອປະຕິບັດໜ້າທີ່ພາຍໃນຂອບເຂດຂອງແຕ່ລະສາຂາວິຊາຊີບ.

- **ໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ (Initial License)** ໝາຍເຖິງ ໃບຢັ້ງຢືນຂີດຄວາມສາມາດຂອງຜູ້ປະກອບວິຊາຊີບປິ່ນປົວອອກໃຫ້ແກ່ຜູ້ຮຽນຈົບຈາກພາຍໃນ ແລະ ຕ່າງປະເທດ ແລະ ສອບເສັງລະດັບຊາດໄດ້, ອອກໃຫ້ໂດຍກະຊວງສາທາລະນະສຸກ ຕາມການສະເໜີຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ.

- **ໃບປະກອບວິຊາຊີບປິ່ນປົວສົມບູນ (Full License)** ໝາຍເຖິງ ໃບຢັ້ງຢືນຂີດຄວາມສາມາດຂອງຜູ້ປະກອບວິຊາຊີບປິ່ນປົວອອກໃຫ້ໂດຍກະຊວງສາທາລະນະສຸກ ຕາມການສະເໜີ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ ໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເອກະຊົນ ໂດຍໄດ້ຮັບການຢັ້ງຢືນ ຄົບຕາມເງື່ອນໄຂ ຈາກສະຖານທີ່ບໍລິການ ແລະ ໄດ້ຜ່ານການປະເມີນ ຈາກຄະນະກໍາມະການ ທີ່ມາຈາກສາຂາວິຊາຊີບຕ່າງໆ.

  ສໍາລັບຜູ້ປະກອບວິຊາຊີບປິ່ນປົວ ທີ່ໄດ້ລົງຮາກຖານຕາມ ຂໍ້ຕົກລົງ ເລກທີ 103/ກຊສ, ລົງວັນທີ 23 ມັງກອນ 2012 ຈະບໍ່ໄດ້ຜ່ານການປະເມີນ.

- **ໃບປະກອບວິຊາຊີບປິ່ນປົວຊົ່ວຄາວ (Temporary License)** ໝາຍເຖິງ ໃບຢັ້ງຢືນຂີດຄວາມສາມາດຂອງຜູ້ປະກອບວິຊາຊີບປິ່ນປົວອອກໃຫ້ໂດຍກະຊວງສາທາລະນະສຸກ ຕາມການສະເໜີຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວຊົ່ວອອກໃຫ້ແກ່ຄົນຕ່າງປະເທດ ທີ່ມີໃບປະກອບວິຊາຊີບປິ່ນປົວທີ່ມີອາຍຸການນໍາໃຊ້ຂອງປະເທດຕົນເອງ ໄລຍະເວລາບໍ່ເກີນ 01 ປີ ທີ່ຕ້ອງການປະຕິບັດວິຊາຊີບປິ່ນປົວຕາມໂຄງການຮ່ວມມືຂອງລັດ ຫຼື ເອກະຊົນ.

- **ການສອບເສັງລະດັບຊາດ (National examination)** ໝາຍເຖິງ ການສອບເສັງເອົາໃບຢັ້ງຢືນປະກອບວິຊາຊີບປິ່ນປົວເບື້ອງຕົ້ນ.

- **ການຂຶ້ນທະບຽນເປັນຜູ້ປະກອບວິຊາຊີບປິ່ນປົວ (Registration for Healthcare Professionals)** ໝາຍເຖິງ ການຂຶ້ນທະບຽນ ໃຫ້ແກ່ຜູ້ທີ່ມີໃບຢັ້ງຢືນປະກອບວິຊາຊີບປິ່ນປົວ ເຂົ້າໃນລະບົບຖານຂໍ້ມູນ.

- **ການຕໍ່ອາຍຸການຂຶ້ນທະບຽນ (Renew of Registration)** ໝາຍເຖິງການຈົດທະບຽນຄັ້ງໃໝ່ ເນື່ອງຈາກໃບທະບຽນຄັ້ງກ່ອນໝົດອາຍຸການນໍາໃຊ້ ແລະ ຮຽກຮ້ອງໃຫ້ມີການຕໍ່ອາຍຸໃບທະບຽນ ທຸກໆ 05 ປີ ຕາມມາດຕະຖານເງື່ອນໄຂທີ່ສະພາຄຸ້ມຄອງວິຊາຊີບປິ່ນປົວໄດ້ກໍານົດໄວ້.

- **ການພັດທະນາວິຊາຊີບຕໍ່ເນື່ອງ (Continuing Professional Development = CPD)** ໝາຍເຖິງ ການພັດທະນາຍົກລະດັບຂີດຄວາມສາມາດໃນວິຊາຊີບຢ່າງເປັນລະບົບຕໍ່ເນື່ອງ ໂດຍການສຶກສາຕໍ່ຍອດໄລຍະຍາວ ແລະ ການພັດທະນາວິຊາຊີບຕໍ່ດ້ວຍການເຂົ້າຮ່ວມການຝຶກອົບຮົມໄລຍະສັ້ນ, ການສໍາມະນາ, ປະຊຸມທາງວິຊາການ, ເປັນຜູ້ສິດສອນທາງດ້ານທິດສະດີ ແລະ ພາກປະຕິບັດ, ການຄົ້ນຄວ້າວິທະຍາສາດ, ການປະກອບສ່ວນໃຫ້ສັງຄົມ, ການຮຽນຮູ້ດ້ວຍຕົນເອງ ແລະ ອື່ນໆ.

## II. ຍຸດທະສາດ

### 1. ຫຼັກການ

ຍຸດທະສາດ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ຂອງ ສປປ ລາວ ແຕ່ປີ2016-2025 ໄດ້ຖືກຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຕາມຫຼັກການດັ່ງຕໍ່ໄປນີ້:

1) ເພື່ອຕອບສະໜອງ ກັບຄວາມຕ້ອງການບູລິມະສິດດ້ານການບໍລິການສຸຂະພາບຂອງປະຊາຊົນ, ຕາມແຜນຍຸດທະສາດ ການພັດທະນາວິຊາຊີບປິ່ນປົວ ໃຫ້ສອດຄ່ອງກັບ ກົດໝາຍ ວ່າດ້ວຍການປິ່ນປົວ;
2) ຕ້ອງໃຫ້ແທດເໝາະກັບສະພາບຄວາມເປັນຈິງ, ມີວິທະຍາສາດ, ນຳໃຊ້ ເຕັກນິກ-ເຕັກໂນໂລຊີ ດ້ານວິທະຍາສາດການແພດຢ່າງມີຫຼັກການ;
3) ມີການຕິດພັນກັບການສົ່ງເສີມຄວາມຫຼາກຫຼາຍດ້ານວິຊາຊີບ, ຮັບປະກັນຄວາມສະເໝີພາບຕາມບົດບາດ ຍິງ-ຊາຍ, ເຜົ່າຊົນ, ຜູ້ຢູ່ຕົວເມືອງ ແລະ ຢູ່ຊົນນະບົດ;
4) ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການອອກໃບປະກອບວິຊາຊີບປິ່ນປົວເພື່ອບັນລຸເປົ້າໝາຍຕາມຫຼັກການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ.

### 2. ເປົ້າໝາຍ

ຜູ້ປະກອບວິຊາຊີບປິ່ນປົວບັນລຸມາດຕະຖານທີ່ກຳນົດໄວ້ເພື່ອການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງແຕ່ລະສາຂາວິຊາຊີບ ນຳໄປສູ່ການປັບປຸງການບໍລິການສຸຂະພາບ ແລະ ມີຜົນໄດ້ຮັບດີຂຶ້ນ.

### 3. ຈຸດປະສົງລວມ

ສ້າງຄວາມເຂັ້ມແຂງ ແລະ ຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ແລະ ກົນໄກ ຂອງລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ສຳລັບຜູ້ປະກອບວິຊາຊີບປິ່ນປົວ ພາຍໃຕ້ຄວາມຮັບຜິດຊອບຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ.

### 4. ຍຸດທະສາດ

1) ສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ;
2) ສ້າງບັນດານິຕິກຳຕ່າງໆສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ;
3) ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສຳລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ;
4) ກຳນົດມາດຕະຖານ, ຂະບວນການສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ແຕ່ລະປະເພດ;
5) ສ້າງລະບົບການຈັດຕັ້ງປະຕິບັດການພັດທະນາວິຊາຊີບແບບຕໍ່ເນື່ອງ (CPD) ໃຫ້ບັນລຸມາດຕະຖານທີ່ກຳນົດໄວ້ເພື່ອຕໍ່ອາຍຸການຂຶ້ນທະບຽນ;
6) ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານສຳລັບລະບົບອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ສ້າງຄວາມເຂັ້ມແຂງໃຫ້ການຕິດຕໍ່ສື່ສານມວນຊົນ.

#### 1) ສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ

1-1. ແຕ່ງຕັ້ງປະທານ, ຮອງປະທານ ແລະ ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ຄະນະບໍລິຫານງານ ຂອງແຕ່ລະສາຂາວິຊາຊີບ;

1-2. ປັບປຸງຂໍ້ຕົກລົງວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວສະບັບເລກທີ່ 033/ ກຊສ, ລົງວັນທີ່ 24 ມັງກອນ

2007; ໂດຍກຳນົດສິດອຳນາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະບໍລິຫານງານ ຂອງແຕ່ລະສາຂາວິຊາຊີບ;

1-3. ກຳນົດ ແລະ ສະໜອງທາງດ້ານເຕັກນິກວິຊາການ, ເພື່ອການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບ ແລະ ຄະນະບໍລິຫານງານ ຂອງແຕ່ລະສາຂາວິຊາຊີບ;

1-4. ກຳນົດແຫຼ່ງທຶນ, ສ້າງ ແລະ ພັດທະນາ ລະບົບຄຸ້ມຄອງການເງິນເພື່ອການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບ ແລະ ຄະນະບໍລິຫານງານຂອງແຕ່ລະສາຂາວິຊາຊີບ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ໂຄງປະກອບການຈັດຕັ້ງຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ (ສຄວປ) ລວມທັງພາລະບົດບາດສິດ ແລະ ໜ້າທີ່ຂອງແຕ່ລະພະແນກ ແລະ ຄະນະບໍລິຫານງານໄດ້ຖືກກຳນົດຢ່າງຈະແຈ້ງ.
- ໃຫ້ມີຄະນະບໍລິຫານງານຂອງສາມສາຂາວິຊາຊີບເຊັ່ນ: ທ່ານໝໍ, ທັນຕະແພດ ແລະ ພະຍາບານ.
- ໃຫ້ມີລະບົບບໍລິຫານການເງິນໃນການປະຕິບັດລະບົບການອອກໃບວິຊາຊີບປິ່ນປົວລະດັບຊາດ.
- ໃຫ້ມີສະຖານທີ່ບ່ອນເຮັດວຽກພ້ອມທັງສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຄົບຊຸດ.
- ໃຫ້ການປະຖົມນິເທດ ແລະ ການຝຶກອົບຮົມໃຫ້ແກ່ຄະນະບໍລິຫານງານ ແລະ ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ.

**ໄລຍະ 2021 - 2025**

- ໃຫ້ມີໂຄງປະກອບການຈັດຕັ້ງຂອງ ສຄວປ ແລະ ມີສະຖານທີ່ພ້ອມທັງມີສິ່ງອຳນວຍຄວາມສະດວກຄົບຊຸດ ແລະ ມີຄະນະບໍລິຫານງານ ຄົບທຸກສາຂາວິຊາຊີບ.

**2) ສ້າງບັນດານິຕິກຳຕ່າງໆ ສຳລັບ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ**

2-1. ແຕ່ງຕັ້ງ ຄະນະກຳມະການ ແລະ ທີມງານ ເພື່ອທົບທວນຄືນ, ປັບປຸງ ແລະ ພັດທະນາບັນດານິຕິກຳຕ່າງໆຂອງ ລະບົບອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ໃຫ້ສອດຄ່ອງກັບບັນດານິຕິກຳອື່ນໆ ທີ່ກ່ຽວຂ້ອງ.

2-2. ສ້າງແຜນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ກ່ຽວກັບ ລະບົບອອກໃບປະກອບວິຊາຊີບປິ່ນປົວ ທີ່ຖືກຮັບຮອງແລ້ວ.

2-3. ເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈ ກ່ຽວກັບບັນດານິຕິກຳຕ່າງໆ ເພື່ອສົ່ງເສີມການຈັດຕັ້ງປະຕິບັດ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນທົ່ວປະເທດ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ນຳໃຊ້ບັນດານິຕິກຳຕ່າງໆ ກ່ຽວກັບ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນທີ່ຖືກຮັບຮອງແລ້ວຂອງ ທ່ານໝໍ, ທັນຕະແພດ ແລະ ພະຍາບານ.
- ຈັດກອງປະຊຸມເຜີຍແຜ່ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ກ່ຽວກັບ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນຂັ້ນສູນກາງ ແລະ ຂັ້ນແຂວງ.

**ໄລຍະແຕ່ປີ 2021 - 2025**

- ນໍາໃຊ້ບັນດານິຕິກໍາຕ່າງໆ ກ່ຽວກັບ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນທີ່ຖືກຮັບຮອງແລ້ວຂອງທຸກສາຂາວິຊາຊີບ.
- ຈັດກອງປະຊຸມເຜີຍແຜ່ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດບັນດານິຕິກໍາຕ່າງໆກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນຂັ້ນສູນກາງ ແລະ ຂັ້ນແຂວງ.

3) **ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ.**

3-1. ແຕ່ງຕັ້ງຄະນະກໍາມະການສອບເສັງລະດັບຊາດ ເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ.

3-2. ກໍານົດຮູບແບບການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນເຊັ່ນ: ຂອບເຂດການສອບເສັງ, ຫົວຂໍ້, ວິຊາ, ຈໍານວນຄັ້ງ, ປະເພດ, ວິທີການຈັດຕັ້ງການສອບເສັງ ແລະ ຄະແນນຜ່ານຫຼືອັດຕາສ່ວນ.

3-3. ສ້າງຕາຕະລາງກໍານົດຄໍາຖາມຂອງບົດສອບເສັງແລະດໍາເນີນການສອບເສັງທົດລອງກັບກຸ່ມເປົ້າໝາຍ.

3-4. ບໍລິຫານຄຸ້ມຄອງການຈັດຕັ້ງປະຕິບັດການສອບເສັງລະດັບຊາດ ເພື່ອຢັ້ງຢືນຂີດຄວາມສາມາດ ສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ ໂດຍຮ່ວມມືກັບແຕ່ລະສະຖາບັນທີ່ກ່ຽວຂ້ອງ ໃນການປະກາດວັນ ແລະ ເວລາການສອບເສັງ, ຄວບຄຸມການສອບເສັງ ແລະ ປະກາດຜົນການສອບເສັງ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ໃຫ້ມີເອກະສານກ່ຽວກັບວິທະຍາການ ແລະ ກົນໄກການບໍລິຫານຄຸ້ມຄອງການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນຢ່າງເປັນລະບົບ.
- ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນສໍາລັບທ່ານໝໍ, ທັນຕະແພດ ແລະ ພະຍາບານ.

**ໄລຍະແຕ່ປີ 2021 - 2025**

- ປັບປຸງເອກະສານກ່ຽວກັບວິທະຍາການ ແລະ ກົນໄກການບໍລິຫານຄຸ້ມຄອງການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນຢ່າງເປັນລະບົບທຸກສາຂາວິຊາຊີບ.
- ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ ສໍາລັບ ທຸກສາຂາວິຊາຊີບ.

4) **ກໍານົດມາດຕະຖານ, ຂະບວນການ ສໍາລັບ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ແຕ່ລະປະເພດ.**

4-1. ກໍານົດມາດຕະຖານ, ຂະບວນການສໍາລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃຫ້ຜູ້ທີ່ສໍາເລັດການສຶກສາໃໝ່ທັງ ພາຍໃນ ແລະ ຕ່າງປະເທດ, ຜູ້ປະກອບວິຊາຊີບປິ່ນປົວທີ່ຍັງບໍ່ທັນມີໃບປະກອບວິຊາຊີບປິ່ນປົວ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງມາປະກອບວິຊາຊີບປິ່ນປົວ ຢູ່ ສ.ປ.ປ ລາວ.

4-2. ສ້າງບັນດາຄູ່ມືມາດຕະຖານ ກ່ຽວກັບ ຂະບວນການສໍາລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ຈັດການຝຶກອົບຮົມໃຫ້ພະນັກງານບໍລິຫານຄຸ້ມຄອງການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ.

4-3. ດໍາເນີນການທົດລອງຂັ້ນຕອນການອອກໃບປະກອບວິຊາຊີບປິ່ນປົວ ແລະ ປັບປຸງກິດຈະກໍາທີ່ຈໍາເປັນເພື່ອຮັບຮອງການຮັບຄໍາຮ້ອງຢ່າງມີປະສິດທິພາບ ແລະ ໂປ່ງໃສ.

4-4. ຄຸ້ມຄອງ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ໂດຍອີງຕາມຂະບວນການ ແລະ ບັນດານິຕິກໍາທີ່ຖືກຮັບຮອງ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ໃຫ້ສໍາເລັດສູງກວ່າ 80% ໃນການອອກໃບປະກອບວິຊາຊີບປິ່ນປົວ ສໍາລັບ ທ່ານໝໍ, ທັນຕະແພດ ແລະ ພະຍາບານ ຜູ້ທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວພາກເອກະຊົນ;
- ໃຫ້ສໍາເລັດສູງກວ່າ 60% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບ ທ່ານໝໍ, ທັນຕະແພດ ແລະ ພະຍາບານ ຜູ້ທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວຂອງລັດ;
- ໃຫ້ສໍາເລັດສູງກວ່າ 90% ໃນການອອກໃບປະກອບວິຊາຊີບປິ່ນປົວຊົ່ວຄາວ ໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານຄົນຕ່າງປະເທດຜູ້ທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວພາກເອກະຊົນ ແລະ ສະຖານທີ່ປິ່ນປົວຂອງລັດ.

**ໄລຍະແຕ່ປີ 2021 - 2025**

- ໃຫ້ສໍາເລັດສູງກວ່າ 90% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບຜູ້ທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວພາກເອກະຊົນ.
- ໃຫ້ສໍາເລັດສູງກວ່າ 80% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບລັດຖະກອນທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວຂອງລັດ.
- ໃຫ້ສໍາເລັດ 100% ໃນການອອກໃບປະກອບວິຊາຊີບປິ່ນປົວຊົ່ວຄາວສໍາລັບຄົນຕ່າງປະເທດທີ່ເຮັດວຽກປິ່ນປົວ ໃນສະຖານທີ່ປິ່ນປົວ ພາກເອກະຊົນ ແລະ ຂອງລັດ.

**5) ສ້າງລະບົບການຈັດຕັ້ງປະຕິບັດການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ບັນລຸມາດຕະຖານທີ່ກໍານົດໄວ້ເພື່ອຕໍ່ອາຍຸການຂຶ້ນທະບຽນ.**

5-1. ກໍານົດມາດຕະຖານການພັດທະນາວິຊາຊີບແບບຕໍ່ເນື່ອງ ສໍາລັບ ຕໍ່ອາຍຸການຂຶ້ນທະບຽນທີ່ລວມທັງປະເພດຂອງກິດຈະກໍາການຮຽນຮູ້ ແລະ ໜ່ວຍກິດທີ່ຕ້ອງສະສົມ ພາຍໃນ 05 ປີ.

5-2. ກໍານົດສະຖາບັນ, ການຈັດຕັ້ງ, ຜູ້ທີ່ສາມາດສະໜອງຄວາມຮູ້ ແລະ ປະສົບການໃຫ້ແກ່ຜູ້ທີ່ຕ້ອງການພັດທະນາວິຊາຊີບແບບຕໍ່ເນື່ອງ ໃນປະຈຸບັນ ແລະ ອະນາຄົດ ລວມທັງການສະໜັບໜູນບັນດາພາກສ່ວນດັ່ງກ່າວໃຫ້ສາມາດປະກອບສ່ວນໃນວຽກງານພັດທະນາວິຊາຊີບໃຫ້ດີຂຶ້ນ.

5-3. ພັດທະນາມາດຕະຖານ ແລະ ເງື່ອນໄຂ ເພື່ອຮັບຮອງກິດຈະກໍາການພັດທະນາວິຊາຊີບແບບຕໍ່ເນື່ອງ ເພື່ອການຕໍ່ອາຍຸການຂຶ້ນທະບຽນ.

5-4. ຄາດຄະເນມູນຄ່າໃນການຈັດຕັ້ງປະຕິບັດກິດຈະກໍາການພັດທະນາວິຊາຊີບແບບຕໍ່ເນື່ອງ, ກໍານົດງົບປະມານ ແລະ ແຫຼ່ງທຶນ.

5-5. ເຮັດສັນຍາກັບສະຖາບັນ ແລະ ສະຖານທີ່ບໍລິການປິ່ນປົວທີ່ຖືກຮັບຮອງເພື່ອຈັດຕັ້ງປະຕິບັດກິດຈະກໍາການພັດທະນາວິຊາຊີບແບບຕໍ່ເນື່ອງ, ກໍານົດຂັ້ນຕອນໃນການຕິດຕາມ ແລະ ປະເມີນຜົນ.

5-6. ບໍລິຫານຄຸ້ມຄອງການຕໍ່ອາຍຸການຂຶ້ນທະບຽນ ໂດຍອີງຕາມຂັ້ນຕອນ ແລະ ຄູ່ມືປະຕິບັດທີ່ຖືກຮັບຮອງ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານໄດ້ຖືກພັດທະນາ ແລະ ຮັບຮອງໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ.
- ການຝຶກອົບຮົມ ກ່ຽວກັບ ການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ການຊີ້ນໍາຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ.
- ຕໍ່ອາຍຸການຂຶ້ນທະບຽນ ໃຫ້ກັບບັນດາຜູ້ປະກອບວິຊາຊີບປິ່ນປົວ ທີ່ ປະຕິບັດໄດ້ຕາມເງື່ອນໄຂຢ່າງຄົບຖ້ວນ.

**ໄລຍະແຕ່ປີ 2021 - 2025**

- ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ ໃຫ້ທຸກສາຂາວິຊາຊີບ ໄດ້ຖືກພັດທະນາ ແລະ ຮັບຮອງ ໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ.
- ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ ໃຫ້ກັບຜູ້ປະກອບວິຊາຊີບປິ່ນປົວ ທຸກສາຂາວິຊາຊີບ ໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ການຊີ້ນໍາຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ.
- ຕໍ່ອາຍຸການຂຶ້ນທະບຽນ ໃຫ້ກັບບັນດາຜູ້ປະກອບວິຊາຊີບປິ່ນປົວ ທີ່ປະຕິບັດຕາມເງື່ອນໄຂຢ່າງຄົບຖ້ວນ.

**6) ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານສໍາລັບລະບົບອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ສ້າງຄວາມເຂັ້ມແຂງໃຫ້ການຕິດຕໍ່ສື່ສານມວນຊົນ.**

6-1. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນສໍາລັບການອອກໃບປະກອບວິຊາຊີບປິ່ນປົວ.

6-2. ຊອກຫາວິທີການເພື່ອເຊື່ອມສານ ຫຼື ເຊື່ອມໂຍງລະບົບຖານຂໍ້ມູນສໍາລັບການອອກໃບປະກອບວິຊາຊີບປິ່ນປົວເຂົ້າກັບລະບົບເກັບກໍາຖານຂໍ້ມູນຂອງຜູ້ປະກອບວິຊາຊີບປິ່ນປົວ ຂອງກົມຈັດຕັ້ງ-ພະນັກງານ ແລະ ຂໍ້ມູນການຝຶກອົບຮົມຂອງກົມການສຶກສາ ແລະ ຄົ້ນຄວ້າວິທະຍາສາດ ເພື່ອຫຼີກລ້ຽງການຊໍ້າຊ້ອນ ແລະ ເພື່ອສົ່ງເສີມການເກັບກໍາຂໍ້ມູນຢ່າງຖືກຕ້ອງ ແລະ ມີປະສິດທິພາບ.

6-3. ສັງລວມ ແລະ ເຜີຍແຜ່ບົດລາຍງານປະຈໍາປີ ລວມເຖິງສະຖິຕິທີ່ກ່ຽວຂ້ອງກັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ.

6-4. ເຜີຍແຜ່ ແລະ ເຊື່ອມຊຶມຂໍ້ມູນທີ່ກ່ຽວຂ້ອງກັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ໂດຍຜ່ານສື່ຕ່າງໆ.

6-5. ຕິດຕາມ ແລະ ປະເມີນຜົນລະດັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈທີ່ກ່ຽວຂ້ອງກັບ ລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ຊອກຫາຊ່ອງຫວ່າງ ເພື່ອຮັບປະກັນ ໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນ.

**<u>ເປົ້າໝາຍທີ່ຈະບັນລຸ</u>**

**ໄລຍະແຕ່ປີ 2016 - 2020**

- ລະບົບຖານຂໍ້ມູນສໍາລັບການອອກໃບປະກອບວິຊາຊີບປິ່ນປົວໄດ້ຖືກສ້າງ ແລະ ຈັດຕັ້ງປະຕິບັດ.
- ເຄື່ອງມືການສື່ສານສໍາລັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໄດ້ຖືກສ້າງ ແລະ

ນຳໃຊ້ (ເວບໄຊ, ໂປດສເຕີ, ປື້ມຄູ່ມື ແລະ ອື່ນໆ)

**ໄລຍະແຕ່ປີ 2021 - 2025**

- ບົດລາຍງານຂໍ້ມູນສະຖິຕິປະຈຳປີຂອງຜູ້ປະກອບວິຊາຊີບປິ່ນປົວໄດ້ຖືກຈັດພິມ ແລະ ເຜີຍແຜ່ຢ່າງເປັນລະບົບ.

**5. ຂົງເຂດການຈັດຕັ້ງປະຕິບັດ**

ແຕ່ 2020 ເຖິງ 2025 ຍຸດທະສາດລະບົບການອອກໃບປະກອບວິຊາຊີບປິ່ນປົວ ຂອງ ສປປລາວ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບໃນຂອບເຂດທົ່ວປະເທດ.

## III. ການຈັດຕັ້ງປະຕິບັດ

ການນຳເອົາຍຸດທະສາດລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ໄປຈັດຕັ້ງປະຕິບັດ ແມ່ນພາລະບົດບາດຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ ພາຍໃຕ້ການຄຸ້ມຄອງຂອງ ກະຊວງສາທາລະນະສຸກ ທີ່ເຮັດໜ້າທີ່ນຳພາໃນການສ້າງແຜນການ, ວິທີການ, ບູລິມະສິດ, ວິທີການດຳເນີນງານ, ການຕິດຕາມ ແລະ ການປະເມີນຜົນຂອງການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ (ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ). ໂດຍມີການປະສານງານຢ່າງສະໜິດແໜ້ນກັບທຸກພາກສ່ວນທີ່ກ່ຽວຂ້ອງ.

## IV. ບົດບັນຍັດສຸດທ້າຍ

ກະຊວງສາທາລະນະສຸກ ມີບົດບາດໃນການນຳພາ, ປະສານງານກັບພາກສ່ວນທີ່ກ່ຽວຂ້ອງເພື່ອແນະນຳ ແລະ ເຜີຍແຜ່ຍຸດທະສາດດັ່ງກ່າວໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ໂຮງຮຽນ, ໂຮງໝໍ ລວມທັງພາກສ່ວນເອກະຊົນຈົ່ງພ້ອມກັນປະກອບສ່ວນໃນການຈັດຕັ້ງປະຕິບັດຍຸດທະສາດ ຂອງລະບົບການອອກໃບປະກອບວິຊາຊີບປິ່ນປົວ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບນີ້ໃຫ້ໄດ້ຮັບຜົນສຳເລັດ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ**

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ

**ນິຕິກຳຕ່າງໆທີ່ກ່ຽວຂ້ອງ**

- ກົດໝາຍວ່າດ້ວຍການປິ່ນປົວເລກທີ່ 58 ສພຊ , ລົງວັນທີ່ 24 ທັນວາ 2014;
- ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ດຳລັດຂອງນາຍົກລັດຖະມົນຕີ ເລກທີ 178/ນຍ, ລົງວັນທີ 5 ເມສາ 2014 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອໄຫວ ຂອງກະຊວງສາທາລະນະສຸກ;
- ດຳລັດວ່າດ້ວຍໂຮງໝໍເອກະຊົນເລກທີ່ 151/ລບ, ລົງວັນທີ່ 28 ເມສາ 2014;
- ຂໍ້ຕົກຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 033/ ກຊສ, ລົງວັນທີ 24 ມັງກອນ 2007;
- ຂໍ້ຕົກລົງ ຂອງ ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍຂີດຄວາມສາມາດທາງການພະຍາບານ ເລກທີ່ 1132/ສທ, ລົງວັນທີ່ 06 ມິຖຸນາ 2013;
- ຂໍ້ຕົກລົງ ຂອງ ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍມາດຕະຖານຂີດຄວາມສາມາດ ຂອງ ທ່ານໝໍປິ່ນປົວ ສປປ ລາວເລກທີ່ 095/ສທ, ລົງວັນທີ່ 14ມັງກອນ 2015;
- ຂໍ້ຕົກລົງ ຂອງ ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍຂີດຄວາມສາມາດຂອງທັນຕະແພດ ສປປ ລາວເລກທີ່ 095/ສທ, ລົງວັນທີ່ 14 ມັງກອນ 2015;

## ຍຸດທະສາດກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ຂຶ້ນທະບຽນ

| | | | | | | |
|---|---|---|---|---|---|---|
| **ເປົ້າໝາຍ** | ຜູ້ປະກອບວິຊາຊີບປິ່ນປົວບັນລຸມາດຕະຖານທີ່ກຳນົດໄວ້ເພື່ອການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງແຕ່ລະສາຂາວິຊາຊີບນຳໄປສູ່ການປັບປຸງການບໍລິການສຸຂະພາບ ແລະ ຜົນໄດ້ຮັບດີຂຶ້ນ | | | | | |
| **ຈຸດປະສົງ** | ສ້າງຄວາມເຂັ້ມແຂງ ແລະ ຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ແລະ ກົນໄກຂອງລະບົບອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນສຳລັບຜູ້ປະກອບວິຊາຊີບປິ່ນປົວ ພາຍໃຕ້ຄວາມຮັບຜິດຊອບຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ | | | | | |
| **ຍຸດທະສາດ** | **1.** ສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ. | **2.** ສ້າງ ບັນດານິຕິກຳຕ່າງໆສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ; | **3.** ຈັດຕັ້ງປະຕິບັດການສອບເສັງລະດັບຊາດ ເພື່ອຢັ້ງຢືນຂີດຄວາມສາມາດສຳລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ. | **4.** ກຳນົດມາດຕະຖານ, ຂະບວນການ ສຳລັບ ການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນແຕ່ລະປະເພດ; | **5.** ສ້າງລະບົບການຈັດຕັ້ງປະຕິບັດການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ບັນລຸມາດຕະຖານທີ່ກຳນົດໄວ້ເພື່ອຕໍ່ອາຍຸການຂຶ້ນທະບຽນ. | **6.** ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານ ສຳລັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ສ້າງຄວາມເຂັ້ມແຂງໃຫ້ການຕິດຕໍ່ສື່ສານມວນຊົນ. |
| **ວຽກງານບູລິມະສິດ** | **1-1.** ແຕ່ງຕັ້ງປະທານ, ຮອງປະທານ ແລະ ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ຄະນະບໍລິຫານງານຂອງແຕ່ລະສາຂາວິຊາຊີບ.<br><br>**1-2.** ສະເໜີປັບປຸງຂໍ້ຕົກລົງວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວສະບັບເລກທີ່ 033/ກຊສ, ລົງວັນທີ່ 24 ມັງກອນ 2007; (ລວມທັງສິດອຳນາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະບໍລິຫານງານຂອງແຕ່ລະສາຂາວິຊາຊີບ)"<br><br>**1-3.** ກຳນົດ ແລະ ສະໜອງທາງດ້ານເຕັກນິກວິຊາການ, | **2-1.** ແຕ່ງຕັ້ງຄະນະກຳມະການ ແລະ ທີມງານເພື່ອທົບທວນຄືນ, ປັບປຸງ, ແລະ ພັດທະນາບັນດານິຕິກຳຕ່າງໆຂອງລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃຫ້ສອດຄ່ອງ ກັບບັນດານິຕິກຳອື່ນໆທີ່ກ່ຽວຂ້ອງ.<br><br>**2-2.** ສ້າງແຜນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆກ່ຽວກັບ ລະບົບອອກໃບປະກອບວິຊາຊີບປິ່ນປົວທີ່ຖືກຮັບຮອງແລ້ວ.<br><br>**2-3.** ເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈບັນດານິຕິກຳຕ່າງເພື່ອສົ່ງເສີມ | **3-1.** ແຕ່ງຕັ້ງຄະນະກຳມະການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສຳລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ.<br><br>**3-2.** ກຳນົດຮູບແບບ ການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສຳລັບການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ ເຊັ່ນ: ຂອບເຂດການສອບເສັງ, ຫົວຂໍ້, ວິຊາ, ຈຳນວນຄັ້ງ, ປະເພດ, ວິທີການຈັດຕັ້ງການສອບເສັງ ແລະ ຄະແນນຜ່ານ ຫຼື ອັດຕາສ່ວນ. | **4-1.** ກຳນົດມາດຕະຖານ, ຂະບວນການສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃຫ້ຜູ້ທີ່ສຳເລັດການສຶກສາໃໝ່ທັງພາຍໃນ ແລະ ຕ່າງປະເທດ, ຜູ້ປະກອບວິຊາຊີບປິ່ນປົວທີ່ຍັງບໍ່ທັນມີໃບປະກອບວິຊາຊີບປິ່ນປົວ ແລະ ຄົນຕ່າງປະເທດທີ່ມີຈຸດປະສົງມາປະກອບວິຊາຊີບປິ່ນປົວ ຢູ່ ສປປ ລາວ.<br><br>**4-2.** ສ້າງບັນດາຄູ່ມືມາດຕະຖານກ່ຽວກັບຂະບວນການສຳລັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ຈັດການຝຶກອົບຮົມໃຫ້ພະນັກງານບໍລິຫານຄຸ້ມຄອງການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ.<br><br>**4-3.** ດຳເນີນການທົດລອງຂັ້ນຕອນການອອກໃບ | **5-1.** ກຳນົດມາດຕະຖານການພັດທະນາວິຊາຊີບແບບຕໍ່ເນື່ອງສຳລັບຕໍ່ອາຍຸການຂຶ້ນທະບຽນທີ່ລວມທັງປະເພດຂອງກິດຈະກຳການຮຽນຮູ້ແລະໜ່ວຍກິດທີ່ຕ້ອງສະສົມພາຍໃນ5ປີ.<br><br>**5-2.** ກຳນົດສະຖາບັນ, ການຈັດຕັ້ງ, ຜູ້ທີ່ສາມາດສະໜອງຄວາມຮູ້ ແລະ ປະສົບການໃຫ້ແກ່ຜູ້ທີ່ຕ້ອງການພັດທະນາວິຊາຊີບແບບຕໍ່ເນື່ອງໃນປະຈຸບັນແລະອະນາຄົດ ແລະ ສະໜັບໜູນບັນດາພາກສ່ວນດັ່ງກ່າວໃຫ້ສາມາດປະກອບສ່ວນໃນວຽກງານພັດທະນາວິຊາຊີບໃຫ້ດີຂຶ້ນ.<br><br>**5-3.** ພັດທະນາມາດຕະຖານແລະເງື່ອນໄຂເພື່ອຮັບຮອງກິດຈະກຳການພັດທະນາວິຊາຊີບແບບ | **6-1.** ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນສຳລັບການອອກໃບປະກອບວິຊາຊີບປິ່ນປົວ.<br><br>**6-2.** ຊອກຫາວິທີການເພື່ອເຊື່ອມສານ ຫຼືເຊື່ອມໂຍງລະບົບຖານຂໍ້ມູນສຳລັບການອອກໃບປະກອບວິຊາຊີບປິ່ນປົວເຂົ້າກັບລະບົບເກັບກຳຖານຂໍ້ມູນຂອງຜູ້ປະກອບວິຊາຊີບປິ່ນປົວຂອງກົມຈັດຕັ້ງພະນັກງານ ແລະ ຂໍ້ມູນການຝຶກອົບຮົມຂອງກົມການສຶກສາ ແລະ ຄົ້ນຄວ້າວິທະຍາສາດ ເພື່ອຫຼີກລຽງການຊ້ຳຊ້ອນ ແລະ ເພື່ອສົ່ງເສີມການເກັບກຳຂໍ້ມູນຢ່າງຖືກຕ້ອງແລະມີປະສິດທິພາບ. |

| | | | | | | |
|---|---|---|---|---|---|---|
| | ເພື່ອການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບ ແລະ ຄະນະບໍລິຫານງານຂອງແຕ່ລະສາຂາວິຊາຊີບ.<br><br>**1-4.** ກຳນົດແຫຼ່ງທຶນ, ສ້າງ ແລະ ພັດທະນາ ລະບົບຄຸ້ມຄອງການເງິນເພື່ອການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບ ແລະ ຄະນະບໍລິຫານງານຂອງແຕ່ລະສາຂາວິຊາຊີບ. | ການຈັດຕັ້ງປະຕິບັດການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນທົ່ວປະເທດ. | **3-3.** ສ້າງຕາຕະລາງກຳນົດຄຳຖາມຂອງບົດສອບເສັງ ແລະ ດຳເນີນການສອບເສັງທົດລອງກັບກຸ່ມເປົ້າໝາຍ.<br><br>**3-4.** ບໍລິຫານຄຸ້ມຄອງການຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສຳລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນໂດຍຮ່ວມມືກັບແຕ່ລະສະຖາບັນທີ່ກ່ຽວຂ້ອງໃນການປະກາດວັນເວລາການສອບເສັງ, ຄວບຄຸມການສອບເສັງ ແລະ ປະກາດຜົນການສອບເສັງ. | ປະກອບວິຊາຊີບປິ່ນປົວ ແລະ ປັບປຸງກິດຈະກຳທີ່ຈຳເປັນເພື່ອຮັບຮອງການຮັບຄຳຮ້ອງຢ່າງມີປະສິດທິພາບ ແລະ ໂປ່ງໃສ.<br><br>**4-4.** ຄຸ້ມຄອງການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໂດຍອີງຕາມຂະບວນການ ແລະ ບັນດານິຕິກຳທີ່ຖືກຮັບຮອງ | ຕໍ່ເນື່ອງເພື່ອການຕໍ່ອາຍຸການຂຶ້ນທະບຽນ.<br><br>**5-4.** ຄາດຄະເນມູນຄ່າໃນການຈັດຕັ້ງປະຕິບັດກິດຈະກຳ ການພັດທະນາ ວິຊາຊີບ ແບບຕໍ່ເນື່ອງ, ກຳນົດງົບປະມານ ແລະ ແຫຼ່ງທຶນ.<br><br>**5-5.** ເຮັດສັນຍາກັບສະຖາບັນ ແລະ ສະຖານ ທີ່ໃຫ້ການບໍລິການປິ່ນປົວທີ່ຖືກຮັບຮອງເພື່ອຈັດຕັ້ງປະຕິບັດກິດຈະກຳການພັດທະນາວິຊາຊີບແບບຕໍ່ເນື່ອງ, ກຳນົດຂັ້ນຕອນໃນການຕິດຕາມ ແລະ ປະເມີນຜົນ.<br><br>**5-6.** ບໍລິຫານຄຸ້ມຄອງການຕໍ່ອາຍຸຂຶ້ນທະບຽນໂດຍອີງຕາມຂັ້ນຕອນ ແລະ ຄູ່ມືປະຕິບັດທີ່ຖືກຮັບຮອງ | **6-3.** ສັງລວມ ແລະ ເຜີຍແຜ່ບົດລາຍງານປະຈຳປີລວມເຖິງສະຖິຕິທີ່ກ່ຽວຂ້ອງກັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ<br><br>**6-4.** ເຜີຍແຜ່ ແລະ ເຊື່ອມຊຶມຂໍ້ມູນທີ່ກ່ຽວຂ້ອງກັບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ໂດຍຜ່ານສື່ຕ່າງໆ<br><br>**6-5.** ຕິດຕາມ ແລະ ປະເມີນຜົນລະດັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈທີ່ກ່ຽວຂ້ອງກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ, ຊອກຫາຊ່ອງຫວ່າງເພື່ອຮັບປະກັນໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນ |

| | | | | | | |
|---|---|---|---|---|---|---|
| **ເປົ້າໝາຍປີ 2016 ຫາ ປີ 2020** | ໂຄງປະກອບການຈັດຕັ້ງຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ (ສຄວປ) ລວມທັງພາລະບົດບາດສິດ ແລະ ໜ້າທີ່ຂອງແຕ່ລະພະແນກ ແລະ ຄະນະບໍລິຫານງານ ໄດ້ຖືກກຳນົດຢ່າງຈະແຈ້ງ.<br><br>ໃຫ້ມີຄະນະບໍລິຫານງານຂອງສາມສາຂາວິຊາຊີບ ເຊັ່ນ: ທ່ານໝໍ, ທັນຕະແພດ ແລະ ພະຍາບານ<br><br>ໃຫ້ມີລະບົບບໍລິຫານການເງິນໃນການປະຕິບັດລະບົບການອອກໃບວິຊາຊີບປິ່ນປົວລະດັບຊາດ<br><br>ໃຫ້ມີສະຖານທີບ່ອນເຮັດວຽກ ພ້ອມທັງສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຄົບຊຸດ.<br><br>ໃຫ້ການປະຖົມນິເທດ ແລະ ການຝຶກອົບຮົມກັບຜູ້ນຳ ແລະ ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ | ນຳໃຊ້ບັນດານິຕິກຳຕ່າງໆກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນທີ່ຖືກຮັບຮອງແລ້ວຂອງທ່ານໝໍ, ທັນຕະແພດ ແລະ ພະຍາບານ.<br><br>ຈັດກອງປະຊຸມເຜີຍແຜ່ແລະສະໜັບສະໜູນການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນຂັ້ນສູນກາງ ແລະ ຂັ້ນແຂວງ. | ໃຫ້ມີເອກະສານກ່ຽວກັບວິທະຍາການ ແລະ ກົນໄກການບໍລິຫານຄຸ້ມຄອງການສອບເສັງລະດັບຊາດ ເພື່ອຢັ້ງຢືນຂີດຄວາມສາມາດສຳລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນເປັນລະບົບ.<br><br>ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສຳລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນສຳລັບທ່ານໝໍ, ທັນຕະແພດ ແລະ ພະຍາບານ. | ໃຫ້ສຳເລັດສູງກວ່າ 80% ໃນການອອກໃບປະກອບວິຊາຊີບປິ່ນປົວ ສຳລັບທ່ານໝໍ, ທັນຕະແພດ ແລະ ພະຍາບານ ຜູ້ທີ່ເຮັດວຽກປິ່ນປົວຢູ່ໃນສະຖານທີ່ປິ່ນປົວພາກເອກະຊົນ<br><br>ໃຫ້ສຳເລັດສູງກ່ວາ 60% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານຜູ້ທີ່ເຮັດວຽກປິ່ນປົວໃນສະຖານທີ່ປິ່ນປົວຂອງລັດ<br><br>ໃຫ້ສຳເລັດສູງກ່ວາ 90% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານຄົນຕ່າງປະເທດຜູ້ທີ່ເຮັດວຽກປິ່ນປົວໃນສະຖານທີ່ປິ່ນປົວພາກເອກະຊົນ ແລະ ສະຖານທີ່ປິ່ນປົວຂອງລັດ (ຜູ້ປະກອບວິຊາຊີບຕ້ອງມີໃບປະກອບວິຊາຊີບຂອງປະເທດຕົນເອງ ທີ່ຍັງມີ ກຳນົດການນຳໃຊ້)<br><br>ສຳເລັດ 100% ໃນການອອກໃບປະກອບວິຊາຊີບປິ່ນປົວຊົ່ວຄາວສຳລັບຄົນຕ່າງປະເທດທີ່ເຮັດວຽກປິ່ນປົວໃນສະຖານທີ່ປິ່ນປົວພາກເອກະຊົນ ແລະ ສະຖານທີ່ປິ່ນປົວຂອງລັດກັບພາກສ່ວນທີ່ກ່ຽວຂ້ອງ | ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານ ໄດ້ຖືກພັດທະນາ ແລະ ຮັບຮອງໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ.<br><br>ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງ ໃຫ້ກັບທ່ານໝໍ, ທັນຕະແພດ ແລະ ພະຍາບານໄດ້ຖືກຈັດຕັ້ງປະຕິບັດ ພາຍໃຕ້ການຊີ້ນຳຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ. | ລະບົບຖານຂໍ້ມູນສຳລັບການອອກໃບປະກອບວິຊາຊີບປິ່ນປົວ ໄດ້ຖືກສ້າງ ແລະ ຈັດຕັ້ງປະຕິບັດ.<br><br>ເຄື່ອງມືການສື່ສານສຳລັບລະບົບອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໄດ້ຖືກສ້າງ ແລະ ນຳໃຊ້ (ເວບໄຊ, ໂປດສເຕີ, ປຶ້ມຄູ່ມື ແລະ ອື່ນໆ) |

| | | | | | | |
|---|---|---|---|---|---|---|
| **ເປົ້າໝາຍປີ 2021 ຫາ ປີ 2025** | ໃຫ້ມີໂຄງປະກອບການຈັດຕັ້ງຂອງສຄວປແລະມີສະຖານທີ່ພ້ອມທັງມີສິ່ງອໍານວຍຄວາມສະດວກຄົບຊຸດ ແລະ ມີຄະນະບໍລິຫານງານຄົບທຸກສາຂາວິຊາຊີບ. | ນໍາໃຊ້ບັນດານິຕິກໍາຕ່າງໆກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນທີ່ຖືກຮັບຮອງແລ້ວຂອງທຸກສາຂາວິຊາຊີບ.<br><br>ຈັດກອງປະຊຸມເຜີຍແຜ່ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດບັນດານິຕິກໍາຕ່າງໆກ່ຽວກັບລະບົບການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນໃນຂັ້ນສູນກາງ ແລະ ຂັ້ນແຂວງ. | ປັບປຸງເອກະສານກ່ຽວກັບວິທະຍາການ ແລະ ກົນໄກການບໍລິຫານຄຸ້ມຄອງການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນເປັນລະບົບທຸກສາຂາວິຊາຊີບ.<br><br>ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດສໍາລັບອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ ສໍາລັບທຸກສາຂາວິຊາຊີບ. | ໃຫ້ສໍາເລັດສູງກ່ວາ 90% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບຜູ້ທີ່ເຮັດວຽກປິ່ນປົວໃນສະຖານທີ່ປິ່ນປົວພາກເອກະຊົນ.<br><br>ໃຫ້ສໍາເລັດສູງກ່ວາ 80% ໃນການອອກໃບປະກອບວິຊາຊີບປິ່ນປົວໃຫ້ກັບລັດຖະກອນທີ່ເຮັດວຽກປິ່ນປົວໃນສະຖານທີ່ປິ່ນປົວຂອງລັດ. | ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ທຸກສາຂາວິຊາຊີບໄດ້ຖືກພັດທະນາ ແລະ ຮັບຮອງໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ.<br><br>ການຝຶກອົບຮົມກ່ຽວກັບການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ກັບຜູ້ປະກອບວິຊາຊີບປິ່ນປົວໄດ້ຖືກຈັດຕັ້ງປະຕິບັດທຸກສາຂາວິຊາຊີບພາຍໃຕ້ການຊີ້ນໍາຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ.<br><br>ຕໍ່ອາຍຸການຂຶ້ນທະບຽນໃຫ້ກັບບັນດາຜູ້ປະກອບວິຊາຊີບປິ່ນປົວ ທີ່ປະຕິບັດຕາມເງື່ອນໄຂຢ່າງຄົບຖ້ວນ. | ບົດລາຍງານຂໍ້ມູນສະຖິຕິປະຈໍາປີຂອງຜູ້ປະກອບວິຊາຊີບປິ່ນປົວໄດ້ຖືກຈັດພິມ ແລະ ເຜີຍແຜ່ຢ່າງເປັນລະບົບ. |

jica

## ຂັ້ນຕອນການອອກໃບປະກອບວິຊາຊີບປິ່ນປົວ




ສໍາລັບທິດທາງຕໍ່ໄປຂອງການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ແມ່ນຈະອອກໃຫ້ພາຍຫຼັງຈາກການສອບເສັງຈົບຕາມຫຼັກສູດ ຈາກສະຖາບັນການສຶກສາຕ່າງໆ. ນັກສຶກສາ ທີ່ສອບເສັງຈົບການສຶກສາແມ່ນຈະຕ້ອງໄດ້ເຂົ້າສອບເສັງລະດັບຊາດ ຊຶ່ງການສອບເສັງຈະຢູ່ພາຍໃຕ້ການຊີ້ນໍາ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ. ຈຸດປະສົງຫຼັກຂອງການສອບເສັງລະດັບຊາດ ແມ່ນເພື່ອຢັ້ງຢືນຂີດຄວາມສາມາດ ແລະ ເພື່ອຮັບປະກັນໃຫ້ການບໍລິການປິ່ນປົວສຸຂະພາບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ໄດ້ກໍານົດໄວ້. ນັກສຶກສາຜູ້ທີ່ສາມາດເສັງຜ່ານການສອບເສັງລະດັບຊາດໄດ້ ແລະ ສາມາດປະຕິບັດໄດ້ຕາມຂໍ້ກໍານົດເງື່ອນໄຂ ເຊັ່ນ ກົດຈັດຍາບັນ ແມ່ນຈະໄດ້ຮັບໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ ແລະ ການຂຶ້ນທະບຽນເຂົ້າໃນລະບົບຖານຂໍ້ມູນ ຕາມສາຂາວິຊາຊີບຂອງຕົນ. ໃນການທີ່ຈະໄດ້ຮັບໃບປະກອບວິຊາຊີບສົມບູນ ຜູ້ປະກອບວິຊາຊີບແມ່ນຈະຕ້ອງໄດ້ລົງປະຕິບັດຕົວຈິງ 3 ປີ ຕາມການຕິດຕາມ ແລະ ແນະນໍາໃນສະຖານທີ່ບໍລິການປິ່ນປົວຂອງລັດ ຫຼື ເອກກະຊົນ. ສໍາລັບຜູ້ປະກອບວິຊາຊີບປິ່ນປົວທີ່ໄດ້ລົງຮາກຖານຢູ່ເຂດຫ່າງໄກແມ່ນບໍ່ຈໍາເປັນທີ່ຈະຕ້ອງໄດ້ ຮັບການຢັ້ງຢືນ ຫຼື ປະເມີນໃນການຮັບໃບປະກອບວິຊາຊີບປິ່ນປົວສົມບູນ ເພາະພວກເຂົາໄດ້ເຮັດວຽກໃນສະພາບຕົວຈິງ ທີ່ຕ້ອງໄດ້ຕັດສິນໃຈເອງ ແລະ ບໍ່ມີຜູ້ຕິດຕາມ. ສໍາລັບຜູ້ປະກອບວິຊາຊີບອື່ນໆ ແມ່ນມີຄວາມຈໍາເປັນທີ່ຈະຕ້ອງໄດ້ຜ່ານການປະເມີນຜົນ ຫຼື ການສໍາພາດ ເພື່ອເປັນການຢັ້ງຢືນເຖິງ ຄຸນະວຸດສໍາລັບໃບປະກອບວິຊາຊີບປິ່ນປົວສົມບູນ. ເພື່ອເປັນການຮັບປະກັນຄວາມຮູ້ ແລະ ທັກສະຂອງການປິ່ນປົວແມ່ນມີຄວາມຈໍາເປັນທີ່ຈະຕ້ອງມີການຕໍ່ອາຍຸການຂຶ້ນທະບຽນ ເປັນຜູ້ປະກອບວິຊາຊີບປິ່ນປົວທຸກໆ 5 ປີ ຕາມການມີສ່ວນຮ່ວມເຂົ້າໃນການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ທີ່ໄດ້ຮັບການອະນຸມັດຈາກສະພາຄຸ້ມຄອງວິຊາຊີບປິ່ນປົວ. ຜູ້ປະກອບວິຊາຊີບປິ່ນປົ່ວທີ່ໄດ້ຮັບໃບປະກອບວິຊາຊີບແຕ່ວ່າບໍ່ໄດ້ໃຫ້ການບໍລິການປິ່ນປົວສຸຂະພາບ ຫຼື ບໍ່ໄດ້ເຂົ້າຮ່ວມ ໃນການຝຶກອົບຮົມວິຊາຊີບຢ່າງຕໍ່ເນື່ອງ ແມ່ນອາດຈະຍັງຮັກສາໃບປະກອບອາຊີບປິ່ນປົວໄດ້ ແຕ່ວ່າບໍ່ສາມາດຂຶ້ນທະບຽນເປັນເປັນຜູ້ປະກອບວິຊາຊີບປິ່ນປົ່ວ ໃນລະບົບຖານຂໍ້ມູນຕາມເງື່ອນໄຂທີ່ກໍານົດໄວ້ວ່າ ຜູ້ທີ່ໄດ້ຮັບໃບປະກອບອາຊີບປິ່ນປົວ ແມ່ນຕ້ອງໄດ້ປະຕິບັດ ແລະ ໃຫ້ການບໍລິການປິ່ນປົວ.

# ລາຍຊື່ບຸກຄົນປະກອບສ່ວນຮ່າງຍຸດທະສາດ

| ລ/ດ | ຊື່ ແລະ ນາມສະກຸນ | ກົມກອງ |
|---|---|---|
| 1. | ສຈ. ດຣ. ເອກສະຫວ່າງ ວົງວິຈິດ | ລັດຖະມົນຕີວ່າການກະຊວງສາທາລະນະສຸກ |
| 2. | ຮສ. ດຣ. ບຸນກອງ ສີຫາວົງ | ຮອງລັດຖະມົນຕີວ່າການກະຊວງສາທາລະນະສຸກ |
| 3. | ຮສ. ດຣ. ຈັນພົມມາ ວົງສຳພັນ | ກົມປິ່ນປົວ |
| 4. | ດຣ. ພິສິດ ພຸດສະຫວັດ | |
| 5. | ນາງ ແພງດີ ອິນທະພານິດ | |
| 6. | ນາງ ວຽງສະຫວັນ ສອນສິນໄຊ | |
| 7. | ດຣ. ທອງສະຫວັນ ແສງກິ່ງດາລາ | |
| 8. | ດຣ. ສົມມະນາ ລັດຕະນະ | |
| 9. | ດຣ. ສີສຸພັນ ຫຼວງລາດ | |
| 10. | ນາງ ອໍລະພົມ ພຸດທະວົງ | |
| 11. | ດຣ ນ. ນິບພະວັນ ພານຸສິດ | |
| 12. | ນາງ ກິ່ງແກ້ວ ວິວັນ | |
| 13. | ດຣ. ບຸນແຍ້ມ ເອກະລາດ | ກົມຈັດຕັ້ງ-ພະນັກງານ |
| 14. | ດຣ. ບຸດທະວົງ ແພງສີສົມບູນ | ກົມການສຶກສາ ແລະ ຄົ້ນຄວ້າວິທະຍາສາດ |
| 15. | ດຣ. ທອງພຸດ ໄຊຊະນະ | |
| 16. | ນາງ ແສງມະນີ ຄຳບຸນເຮືອງ | |
| 17. | ດຣ ນ. ຈັນສະຫວ່າງ ວົງຄຳຊາວ | |
| 18. | ທ້າວ ພອນສະຫວັນ ທຳມະວົງສາ | |
| 19. | ດຣ ນ. ນອນສີ ແກ້ວວັນເພັງ | |
| 20. | ດຣ. ໂພໄຊ ສຸລິຍະວົງສາ | |
| 21. | ດຣ. ພັດ ເກິ່ງຊາເນດ | ຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ |
| 22. | ທ່ານ ຈັນສະໝອນ ເພັງສະຫວັນ | ພະແນກກົດໝາຍຫ້ອງການກະຊວງສາທາລະນະສຸກ |
| 23. | ດຣ. ຖະໜອມ ອິນສານ | ສູນສະໜອງຢາ - ອຸປະກອນການແພດ |
| 24. | ດຣ. ພູທອນ ວັງກອນວິໄລ | ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ |
| 25. | ຮສ. ດຣ ນ. ມະນີວັນ ສີສຸພັນທອງ | |
| 26. | ຮສ. ດຣ. ນີຣັນ ພູມິນ | |
| 27. | ດຣ. ບຸນຍົງ ສີດາພອນ | |
| 28. | ດຣ. ເກດສົມສຸກ ບຸບຜາວັນ | |
| 29. | ດຣ. ຈັນທະວີເສີາ ພັນທະນາໄລ | |
| 30. | ອາຈານ ສຸກສະຫວັນ ພັນປະເສີດ | |

| | | |
|---|---|---|
| 31. | ນາງ ອາພອນ ວິຊາເທບ | ໂຮງໝໍ ມະໂຫສົດ |
| 32. | ດຣ ນ. ອຸໄດວອນ ຣັດຕະນະວົງ | |
| 33. | ນາງ ສີວັນ ສີບຸນເຮືອງ | ໂຮງໝໍ ມິດຕະພາບ |
| 34. | ນາງ ປິ່ນດາວອນ ພະໄຊຍະວົງ | ໂຮງໝໍ ເຊດຖາທິຣາດ |
| 35. | ດຣ. ໄຊຍະເດດ ຈັນທະວົງ | ໂຮງໝໍ ແມ່ ແລະ ເດັກເກີດໃໝ່ |
| 36. | ດຣ. ເພັດດາວັນ ພອນແກ້ວ | ໂຮງໝໍ ເດັກ |
| 37. | ນາງ ມິວະ ໂຊໂນດະ | ໂຄງການພັດທະນາຊັບພະຍາກອນມະນຸດແບບຍືນຍົງ ເພື່ອປັບປຸງການບໍລິການສຸຂະພາບແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ສ.ປ.ປ.ລາວ |
| 38. | ນາງ ຄາຊູໂກະ ອິວະຊະວະ (ທີ່ປຶກສາຈາກກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ປະເທດຍີ່ປຸ່ນ) | |
| 39. | ດຣ. ອາຣິ ໂຣເຕມ | |
| 40. | ນາງ ກາຊູເອະ ໂສເນະ | |
| 41. | ນາງ ມິມາລາ ປະທຸມຊາດ | |
| 42. | ນາງ ແອນນີ ວິໄລວົງ | |
| 43. | ທ້າວ ວິໄລສັກ ຄອນສະຫວັນ | |

Lao's People Democratic Republic

Peace Independence Democracy Unity Prosperity

# Strategy

## On Healthcare Professional Licensing and Registration System in Lao PDR

## 2016-2025

( Unofficial transtlation )

# Contents


Title Page

I. Introduction.......... 1
1. Background.......... 1
2. Situation of regulations for healthcare professionals in Lao PDR.......... 2
3. Needs to elaborate a strategy on licensing and registration of healthcare professionals.......... 2
4. The purpose of the strategy for licensing and registration of healthcare professionals.......... 2
5. Definition of terms.......... 2

II. Goal and Objective.......... 4
1. Principle.......... 4
2. Goal.......... 4
3. Overall Objective .......... 4
4. Strategy .......... 4
1) Strengthen organizational capacity of the Healthcare Professional Council .......... 4
2) Develop the legal and regulatory framework for the licensing and registration system for healthcare professionals.......... 5
3) Implement national licensure examination for healthcare professionals.......... 5
4) Formulate standard and procedures for issuing professional license and registering healthcare professionals.......... 6
5) Develop a system for implementing continuing professional development (CPD) that meets the requirements for renewal of registration of healthcare professionals.......... 7
6) Develop information management system for licensing and registration of the healthcare professionals and strengthen public communication.......... 7
5. Scope of Implementation.......... 8

**III. Implementation........................................................................................................ 8**

**IV. Final Provision ........................................................................................................ 8**

**Annex 1: Relating Legislations.......................................................................................... 9**

**Annex 2: Frame work of Strategy for the Licensing system**

**for healthcare professionals.......................................................................... 10**

**Annex 3: Flow of Health Care Professional Licensing .......................................................... 12**

Lao People's Democratic Republic
Peace Independence Democracy Unity Prosperity
*********

Ministry of Health

No: 3172 / MOH
Vientiane dated: 03 December 2015

# Decree of Minister of Health

